## ບົດຮຽນ 22 - ອັກຄະສາວົກເວົ້າເຖິງຊົນຊາດອິດສະຣາເອນ - ພາກທີ 2

ໃນບົດຮຽນທີ 21, ເຮົາໄດ້ຮຽນຮູ້ວ່າໃນກິດຈະການ 1-7: ອິດສະຣາເອນຍັງເປັນຊົນຊາດທີ່ພຣະເຈົ້າຊົງເລືອກ. ຍັງໃຊ້ຊີວິດຢູ່ພາຍໃຕ້ພຣະບັນຍັດ ແລະ ຍັງສະແຫວງຫາອານາຈັກເທິງແຜ່ນດິນໂລກນີ້. ບັດນີ້, ພວກເຮົາຈະພິຈາລະນາເບິ່ງຄຳຖາມທີ່ວ່າ ຂ່າວປະເສີດທີ່ປະກາດໃນກິດຈະການບົດທີ 1-7 ແມ່ນຫຍັງ?

### ຂ່າວປະເສີດທີ່ປະກາດໂດຍເປໂຕ

ໂບດຫຼາຍແຫ່ງ, ງານສຳມະນາຕ່າງໆ ແລະ ວິທະຍາໄລພຣະຄຳພີຈຳນວນຫຼາຍສອນວ່າ ຄຣິສຕະຈັກ, ຮ່າງກາຍຂອງພຣະຄຣິດໄດ້ເລີ່ມຕົ້ນໃນກິດຈະການບົດທີ 2. ພວກເຂົາອ້າງວ່າ, ອັນນີ້ເປັນບ່ອນທີ່ຂ່າວປະເສີດແຫ່ງພຣະຄຸນຖືກປະກາດເປັນຄັ້ງທຳອິດ. ເປໂຕ ແລະ ອັກຄະສາວົກ ຄົນອື່ນໆ ປະກາດຂ່າວປະເສີດແຫ່ງພຣະຄຸນໃນກິດຈະການ 2 ບໍ? ພວກເຮົາຈະຕອບຄຳຖາມນີ້ໂດຍເບິ່ງສິ່ງທີ່ເປໂຕປະກາດໃນກິດຈະການ 2. ໂດຍສະເພາະແລ້ວ, ພວກເຮົາຈະກວດເບິ່ງບົດນີ້ ເພື່ອເບິ່ງສິ່ງທີ່ລາວໄດ້ປະກາດເລື່ອງການສິ້ນພຣະຊົນ, ການຄືນພຣະຊົນ ແລະ ການສະເດັດຂຶ້ນຂອງພຣະຄຣິດ.

ເປໂຕປະກາດຫຍັງເລື່ອງການສິ້ນພຣະຊົນຂອງພຣະເຢຊູຄຣິດ? ປະຈຸບັນນີ້ ພວກເຮົາເທດສະໜາວ່າ ການສິ້ນພຣະຊົນຂອງພຣະຄຣິດເທິງໄມ້ກາງແຂນແມ່ນຂ່າວປະເສີດ—ຂ່າວດີທີ່ສຸດທີ່ໄດ້ມອບໃຫ້ມະນຸດ! [ເບິ່ງບົດທີເຈັດ ເພື່ອທົບທວນຄືນຂ່າວດີກ່ຽວກັບໄມ້ກາງແຂນ.] ອັນນີ້ແມ່ນຂໍ້ຄວາມທີ່ພວກເຮົາພົບເຫັນຢູ່ໃນກິດຈະການບົດທີ 1-7 ບໍ? "ໂດຍສອດຄ່ອງກັບແຜນການຂອງພຣະເຈົ້າ ທີ່ພຣະອົງໄດ້ກຳນົດຄາດໝາຍໄວ້ລ່ວງໜ້າກ່ອນແລ້ວວ່າ ພຣະເຢຊູເຈົ້າຈະຖືກຄຶງໄວ້ທີ່ໄມ້ກາງແຂນ ແລະປະຫານຊີວິດ:" (ກິດຈະການ 2:23). "ເຫດສະນັ້ນ ປະຊາຊົນອິດສະຣາເອນທຸກຄົນເອີຍ ພວກທ່ານຈຳເປັນຕ້ອງຮູ້ຢ່າງຄັກແນ່ວ່າ ພຣະເຢຊູຄຣິດເຈົ້າອົງນີ້ ຜູ້ທີ່ພວກທ່ານໄດ້ຕອກຄຶງໄວ້ທີ່ໄມ້ກາງແຂນນີ້ແຫຼະ ແມ່ນຜູ້ຖືກຕັ້ງໄວ້ໃຫ້ເປັນທັງພຣະອົງເຈົ້າ ແລະ ເປັນພຣະຄຣິດ" (ກິດຈະການ 2:36).

ຮູບ

ທີ່ມາ: https://filedn.com/lD0GfuMvTstXgqaJfpLL87S/sweet_images/jpg/44/44_Ac_02_03_RG.jpg -
ໃຊ້ເພື່ອເປັນຕົວຢ່າງການປະກາດຂອງເປໂຕໃນກິດຈະການ 2 ເທົ່ານັ້ນ.

ເປໂຕບໍ່ໄດ້ປະກາດຄວາມລອດພົ້ນທີ່ມີມາໂດຍທາງຄວາມເຊື່ອຂອງການສິ້ນພຣະຊົນຂອງພຣະຄຣິດ. ລາວບໍ່ໄດ້ປະກາດວ່າ ການຕາຍຂອງພຣະເຢຊູຄຣິດເທິງໄມ້ກາງແຂນແມ່ນຂ່າວປະເສີດ. ແຕ່ລາວໄດ້ຖິ້ມໂທດໃຫ້ອິດສະຣາເອນທີ່ຕອກຕຶງພຣະຜູ້ເປັນເຈົ້າ. ລາວໄດ້ກ່າວເຕືອນເຖິງຜົນສະທ້ອນຂອງການກະທຳຂອງພວກເຂົາ. ເລື່ອງໄມ້ກາງແຂນບໍ່ແມ່ນສິ່ງທີ່ຜູ້ຟັງຂ່າວປະເສີດໃນພຣະກິດຈະການ 2 ຢາກໄດ້ຍິນ, ແຕ່ມັນເປັນເຫດໃຫ້ເກີດຄວາມອັບອາຍ ແລະ ຢ້ານກົວ.

ເປໂຕປະກາດຫຍັງກ່ຽວກັບການຄືນພຣະຊົນຂອງພຣະເຢຊູຄຣິດ? ມື້ນີ້, ພວກເຮົາປະກາດວ່າ ພຣະຄຣິດໄດ້ຖືກຍົກຂຶ້ນມາເພື່ອຄວາມຍຸດຕິທຳຂອງພວກເຮົາ (ໂຣມ 4: 25). ແຕ່ບໍ່ພົບຄຳສອນດັ່ງກ່າວຢູ່ໃນກິດຈະການບົດທີ 2! "ເພາະເພິ່ນເປັນຜູ້ທຳນວາຍ ແລະ ໄດ້ຮູ້ພຣະສັນຍາຂອງພຣະເຈົ້າທີ່ມີໄວ້ກັບເພິ່ນເອງຄື: ພຣະເຈົ້າໄດ້ສັນຍາໄວ້ວ່າ ພຣະອົງຈະໃຫ້ຜູ້ໜຶ່ງໃນເຊື້ອສາຍຂອງເພິ່ນຂຶ້ນເປັນກະສັດເທິງພຣະທີ່ນັ່ງຂອງເພິ່ນ;" (ອ່ານກິດຈະການ 2:29-31).

ເປໂຕປະກາດວ່າ ພຣະຄຣິດໄດ້ຄືນມາຈາກຕາຍ ເພື່ອນັ່ງເທິງບັນລັງຂອງດາວິດ. ອັນນີ້ເວົ້າເຖິງອານາຈັກດຽວກັນກັບທີ່ໄດ້ສັນຍາໄວ້ໃນພຣະຄຳພີເດີມ.

ໃນທີ່ສຸດ, ເປໂຕໄດ້ປະກາດຫຍັງກ່ຽວກັບການສະເດັດຂຶ້ນສູ່ສະຫວັນຂອງພຣະເຢຊູຄຣິດ? ພວກເຮົາໃນປະຈຸບັນນີ້ປະກາດການສະເດັດຂຶ້ນສູ່ສະຫວັນເປັນຂ່າວປະເສີດ - ພຣະຄຣິດໄດ້ນັ່ງຂ້າງພຣະບິດາ. ຜູ້ທີ່ "ສູງກວ່າບັນດາວິນຍານທີ່ຄອບຄອງ, ຜູ້ມີອຳນາດ, ຜູ້ມີຣິດເດດ, ຜູ້ມີອານຸພາບ" ໃນສະຫວັນ (ເອເຟໂຊ 1:20-22).

ອີກເທື່ອໜຶ່ງ, ອັນນີ້ແມ່ນຕ່າງກັນຫຼາຍຈາກສິ່ງທີ່ເປໂຕໄດ້ປະກາດໃນກິດຈະການ 2. "ດ້ວຍເຫດວ່າ ດາວິດບໍ່ໄດ້ຂຶ້ນໄປເທິງສະຫວັນ ແຕ່ເພິ່ນໄດ້ກ່າວວ່າ: ອົງພຣະຜູ້ເປັນເຈົ້າຊົງກ່າວແກ່ພຣະອົງເຈົ້າຂອງຂ້ານ້ອຍວ່າ ຈົ່ງນັ່ງທີ່ເບື້ອງຂວາມືຂອງເຮົາ, ຈົນກວ່າເຮົາໄດ້ປາບເຫຼົ່າສັດຕູຂອງເຈົ້າໃຫ້ຢູ່ໃຕ້ພື້ນຕີນຂອງເຈົ້າ" (ກິດຈະການ 2:34-35). ສິ່ງທີ່ເປໂຕໄດ້ກ່າວໝາຍເຖິງ ພຣະຄຣິດຈະນັ່ງຂ້າງພຣະບິດາຈົນກວ່າເວລາທີ່ຈະທຳລາຍສັດຕູຂອງພຣະອົງມາເຖິງ. ເມື່ອເປໂຕກ່າວເຖິງການສະເດັດຂຶ້ນສູ່ສະຫວັນ, ສຳລັບພວກເຮົາໃນວັນນີ້ ກໍເປັນສິ່ງທີ່ເຮົາບໍ່ຢາກໄດ້ຍິນປານໃດ. ແຕ່ມັນກໍເປັນການເຕືອນເຖິງການພິພາກສາ ທີ່ຈະມາເຖິງ! ຄວາມຈິງແລ້ວ ພວກເຮົາບໍ່ເຫັນຂ່າວປະເສີດແຫ່ງພຣະຄຸນໃນພຣະທຳກິດຈະການ 1–7. ພວກເຮົາສອນກັນວ່າ ການສິ້ນພຣະຊົນຂອງພຣະເຢຊູຄຣິດເທິງໄມ້ກາງແຂນແມ່ນຂ່າວປະເສີດເລື່ອງຄວາມລອດພົ້ນ - ພຣະຄຣິດໄດ້ສິ້ນພຣະຊົນເພື່ອບາບກຳຂອງພວກເຮົາ. ໃນກິດຈະການບົດທີ 2 ໄມ້ກາງແຂນເປັນການປະກາດເຕືອນເຖິງການພິພາກສາ - ຜູ້ທີ່ໄດ້ລົງມືທຳຮ້າຍພຣະອົງ ແລະ ພຣະອົງຈະສະເດັດຄືນມາ ເພື່ອການພິພາກສາພວກເຂົາ.

<u>ການສະຫຼຸບກ່ຽວກັບພຣະທຳກິດຈະການ 1-7</u>

ໃນບົດຮຽນທີຊາວເອັດ ແລະ ຊາວສອງ ພວກເຮົາເຮົາໄດ້ຮຽນຮູ້ກ່ຽວກັບພຣະທຳກິດຈະການຈາກບົດທີໜຶ່ງເຖິງບົດທີເຈັດ:

1) ມະນຸດທັງຫຼາຍຍັງຄົງສືບຕໍ່ໃຊ້ຊີວິດຢູ່ພາຍໃຕ້ພຣະບັນຍັດ.

2) ຄວາມຫວັງຂອງພວກສາວົກຄື ລາຊະອານາຈັກຂອງພຣະເຈົ້າທີ່ຈະມາສູ່ແຜ່ນດິນໂລກ.

3) ອິດສະຣາເອນເປັນຊົນຊາດທີ່ພຣະເຈົ້າຊົງເລືອກ. ພຣະເຈົ້າໄດ້ເວົ້າກັບອິດສະຣາເອນດ້ວຍວິທີການທີ່ພຣະອົງບໍ່

ເຄີຍເວົ້າກັບຊົນຊາດອື່ນ.

4) ຂ່າວປະເສີດທີ່ພວກເຂົາປະກາດແມ່ນກ່ຽວກັບການສ້າງຕັ້ງອານາຈັກຂອງພຣະເຈົ້າເທິງແຜ່ນດິນໂລກ. ອິດສະ

ຣາເອນຖືກຕຳນິທີ່ຕອກຄຶງພຣະເຢຊູເຈົ້າ ແລະ ຖືກກ່າວເຕືອນເຖິງການພິພາກສາທີ່ຈະມາເຖິງ.

ໃນຍຸກແຫ່ງພຣະຄຸນນີ້:

1) ພວກເຮົາບໍ່ໄດ້ຢູ່ພາຍໃຕ້ພຣະບັນຍັດ, ແຕ່ຢູ່ພາຍໃຕ້ພຣະຄຸນ (ໂຣມ 6:14).

2) ພວກເຮົາໄດ້ຮັບພຣະສັນຍາເລື່ອງບ້ານນິລັນດອນໃນສະຫວັນ, ບໍ່ແມ່ນອານາຈັກເທິງແຜ່ນດິນໂລກ (ເອເຟ

ໂຊ 2:6; ຟີລິບປອຍ 3:20).

3) ໃນປະຈຸບັນນີ້, ອິດສະຣາເອນບໍ່ແມ່ນຊົນຊາດທີ່ພຣະເຈົ້າຊົງເລືອກ ຫຼືເຫນືອກວ່າຊົນຊາດອື່ນອີກແລ້ວ. ບໍ່ມີຄວາມແຕກຕ່າງລະຫວ່າງຊາວຢິວ ແລະ ຄົນຕ່າງຊາດ. ທຸກຄົນມີຄວາມເທົ່າທຽມກັນດ້ານຈິດວິນຍານ ຫຼື ພຣະພອນ (ໂຣມ 3:9; 10:12).

4) ພວກເຮົາຕ້ອງປະກາດຂ່າວປະເສີດແຫ່ງພຣະຄຸນ ຄື ການປະກາດເຖິງສິ້ນພຣະຊົນຂອງພຣະຄຣິດ ເປັນຂ່າວປະເສີດແຫ່ງຄວາມລອດພົ້ນ.

ບົດທີຫນຶ່ງເຖິງບົດທີເຈັດຂອງພຣະທຳກິດຈະການແມ່ນການສືບຕໍ່ພຣະຄຳພີເດີມຂອງ "ເວລາທີ່ຜ່ານມາ" (ເອເຟໂຊ 2:11). ພວກເຂົາໃຫ້ຂໍ້ມູນເພີ່ມເຕີມກ່ຽວກັບຊ່ວງເວລາຈາກໂມເຊຫາພຣະຄຣິດ (ພຣະບັນຍັດຫາພຣະຄຸນ) [ເບິ່ງໂຣມ 5:13–16]. ພວກເຮົາຍັງຕ້ອງໃສ່ໃຈກັບ "ພຣະສັນຍາ" ທີ່ມອບໃຫ້ແກ່ອັບຣາຮາມ (ຄາລາເຕຍ 3:17). ພວກສາວົກຍັງໃຊ້ຊີວິດຢູ່ພາຍໃຕ້ "ພຣະບັນຍັດ" (ຄາລາເຕຍ 3: 17).

<u>ອານາຈັກທີ່ພຣະເຈົ້າຊົງມອບໃຫ້</u>

ກ່ອນຈະອອກຈາກພຣະທຳກິດຈະການ, ພວກເຮົາຕ້ອງສັງເກດເຫດການສຳຄັນທີ່ບັນທຶກໄວ້ໃນພຣະທຳເຫຼັ້ມນີ້. ຈາກການສຶກສາໃນພຣະຄຳພີເດີມທີ່ຜ່ານມາ, ພວກເຮົາເຫັນວ່າ ອິດສະຣາເອນໄດ້ຮັບພຣະສັນຍາວ່າ ຈະໄດ້ຮັບອານາຈັກ. ພຣະເຢຊູຄຣິດ ແລະພວກອັກຄະສາວົກໄດ້ປະກາດວ່າ ອານາຈັກນີ້ໃກ້ມາເຖິງແລ້ວ. ແຕ່ອານາຈັກນີ້ບໍ່ເຄີຍໄດ້ມອບໃຫ້ແກ່ອິດສະຣາເອນ. ຄວາມຈິງແລ້ວ, ຈະບໍ່ສາມາດມອບໃຫ້ໄດ້ຈົນກວ່າພຣະເຢຊູຄຣິດໄດ້ສິ້ນພຣະ

ຊົນເທິງໄມ້ກາງແຂນ ເປັນຄ່າໄຖ່ສຳລັບມະນຸດແລ້ວ. ຄັ້ງທຳອິດທີ່ອິດສະຣາເອນໄດ້ຮັບອານາຈັກນີ້ແມ່ນຢູ່ໃນກິດຈະການ 1-7. ໃນກິດຈະການ 3:19-21 ເປໂຕປະກາດແກ່ "ຊາວອິດສະລາເອນ" ແລະ ບອກພວກເຂົາວ່າ ພວກເຈົ້າຕ້ອງກັບໃຈໃຫມ່ [ຈາກບາບຂອງພວກເຂົາທີ່ໄດ້ຕອກຄຶງພຣະເຢຊູເຈົ້າ]. ເພິ່ນບອກວ່າ ພຣະເຢຊູຄຣິດຈະສະເດັດກັບມາອີກ ແລະ ຈະຊົງຟື້ນຟູທຸກສິ່ງ, ດັ່ງທີ່ຜູ້ປະກາດພຣະທຳໄດ້ສັນຍາໄວ້ໃນພຣະຄຳພີເດີມ. ທຸກຢ່າງໄດ້ຖືກກຳນົດສຳລັບອິດສະຣາເອນ ເພື່ອການຮັບເອົາອານາຈັກຂອງພວກເຂົາ.

ຢ່າງໃດກໍຕາມ, ພຣະທຳກິດຈະການບອກເລື່ອງທີ່ໜ້າເສົ້າກ່ຽວກັບອິດສະຣາເອນ. ອິດສະລາເອນໄດ້ປະຕິເສດອານາຈັກຂອງພຣະເຈົ້າຢ່າງຮຸນແຮງ. ຈຸດແຕກຫັກແມ່ນມາຮອດເຫດການໃນພຣະທຳກິດຈະການ 7:51-60 ເມື່ອພວກເຂົາແກວ່ງກ້ອນຫີນໃສ່ສະເຕຟາໂຕ. ອິດສະຣາເອນຕໍ່ຕ້ານພຣະວິນຍານບໍລິສຸດ. ພວກເຂົາໄດ້ກະທຳຜິດໂດຍການທໍລະຍົດ ແລະທີ່ຂ້າລູກຂອງພຣະເຈົ້າ. ການຕັດສິນໃຈຂອງຜູ້ນຳຂອງອິດສະຣາເອນແມ່ນການກະທຳທີ່ພຣະຄຣິດໄດ້ເຕືອນແລ້ວໃນມັດທາຍ 12:31-32. ໃນກິດຈະການ 7, ອິດສະຣາເອນເຮັດບາບທີ່ບໍ່ສາມາດໃຫ້ອະໄພໄດ້ ຄືພວກເຂົາໄດ້ໝິ່ນປະໝາດພຣະວິນຍານບໍລິສຸດ. (ພວກສາວົກເຕັມໄປດ້ວຍພຣະວິນຍານບໍລິສຸດໃນກິດຈະການບົດທີ 1-7, ແຕ່ອິດສະຣາເອນໄດ້ປະຕິເສດພຣະວິນຍານບໍລິສຸດດັ່ງທີ່ພຣະອົງໄດ້ກ່າວຜ່ານພວກສາວົກ.)

ໃນຂະນະທີ່ສະເຕຟາໂນກຳລັງຈະຖືກແກວ່ງກ້ອນຫີນໃສ່, ລາວເວົ້າວ່າ, "ເບິ່ງແມ, ຂ້ານ້ອຍເຫັນແຜ່ນດິນສະຫວັນໃນທີ່ນັ້ນ ແລະ ເຫັນພຣະບຸດຂອງພຣະເຈົ້າຢືນຢູ່ທີ່ກ້ຳຂວາຂອງພຣະອົງ" (ກິດຈະການ 7:55). ເປັນຫຍັງພຣະເຢຊູຄຣິດຈຶ່ງຢືນຢູ່? ໃນບົດທີ 2 (ຂໍ້ 34) ພວກເຮົາໄດ້ເຫັນແລ້ວວ່າ ພຣະອົງນັ່ງ. ເມື່ອອ່ານຜ່ານພຣະຄຳພີເດີມ, ພວກເຮົາເຫັນວ່າພຣະຜູ້ເປັນເຈົ້າຢືນຢູ່ເມື່ອເຖິງເວລາທີ່ພຣະອົງຈະໃຫ້ການພິພາກສາແກ່ສັດຕູຂອງພຣະອົງ. "ຂ້າເດພຣະເຈົ້າຢາເວຈົ່ງລຸກຂຶ້ນເຖີດ, ຢືນຕໍ່ສູ້ສັດຕູທີ່ກື້ໂກດຂ້ານ້ອຍດ້ວຍ, ຂໍໂຜດລຸກຂຶ້ນຊ່ວຍຂ້ານ້ອຍແດ່ ເພາະຄວາມຍຸດຕິທຳຄືສິ່ງທີ່ພຣະອົງຕ້ອງການ" (ເພງສັນລະເສີນ 7:6).

ພຣະເຈົ້າພຣະບິດາກ່າວກັບອິດສະຣາເອນໃນພຣະຄຳພີເດີມຜ່ານຜູ້ປະກາດພຣະທຳ. ແຕ່ອິດສະຣາເອນໄດ້ຂ້າຜູ້ປະກາດພຣະທຳນັ້ນ. ພຣະບຸດໄດ້ກ່າວກັບອິດສະຣາເອນ ໃນເວລາທີ່ພຣະອົງຍັງຢູ່ເທິງແຜ່ນດິນໂລກ (ໃນມັດທາຍ, ມາຣະໂກ, ລູກາ ແລະ ໂຢຮັນ). ແຕ່ອິດສະຣາເອນໄດ້ຄຶງພຣະບຸດຂອງພຣະເຈົ້າ. ພຣະວິນຍານບໍລິສຸດໄດ້ກ່າວກັບອິດສະຣາເອນໃນກິດຈະການ 1-7 ຕອນທີ່ພວກສາວົກເຕັມໄປດ້ວຍພຣະວິນຍານບໍລິສຸດ. ແຕ່ອິດສະຣາເອນໄດ້ຕໍ່ຕ້ານ ແລະ ຫມິ່ນປະຫມາດພຣະວິນຍານບໍລິສຸດ. ອິດສະຣາເອນໄດ້ເຮັດບາບທີ່ບໍ່ສາມາດໃຫ້ອະໄພໄດ້. ພວກເຂົາພ້ອມແລ້ວທີ່ຈະຮັບການພິພາກສາ.

[ໃນບົດຮຽນຕໍ່ໄປນີ້, ພວກເຮົາຈະເບິ່ງສິ່ງທີ່ເກີດຂຶ້ນກັບອິດສະຣາເອນຫຼັງຈາກກິດຈະການບົດທີ 7.]

<u>ຄຳຖາມທວນຄືນ ບົດຮຽນ 22 - ອັກຄະສາວົກກ່າວກັບອິດສະຣາເອນ - ພາກທີ 2</u>

<u>ຖືກ ຫຼື ຜິດ</u>

1. ໃນກິດຈະການບົດທີ 1-7, ທຸກຊາດມີຖານະເທົ່າທຽມກັນໃນສາຍພຣະເນດຂອງພຣະເຈົ້າ.

2. ປະຈຸບັນນີ້ພວກເຮົາປະກາດວ່າ ການສິ້ນພຣະຊົນຂອງພຣະເຢຊູເທິງໄມ້ກາງແຂນແມ່ນຂ່າວປະເສີດເລື່ອງຄວາມລອດພົ້ນ.

3. ຜູ້ທີ່ເຊື່ອໃນພຣະເຈົ້າໃນຍຸກແຫ່ງພຣະຄຸນນີ້ຄວນພິຈາລະນາເຖິງການສະເດັດຂຶ້ນສູ່ສະຫວັນຂອງພຣະເຢຊູຄຣິດເປັນການເຕືອນເຖິງການພິພາກສາ.

4. ພຣະເຈົ້າລົບລ້າງພຣະບັນຍັດ ເມື່ອພຣະຄຣິດໄດ້ສິ້ນພຣະຊົນຢູ່ເທິງໄມ້ກາງແຂນ. ໂດຍຜ່ານພຣະທຳກິດຈະການໝົດທັງເຫຼັ້ມ, ພວກສາວົກໄດ້ໃຊ້ຊີວິດພາຍໃຕ້ພຣະຄຸນ.

<u>ຄຳຖາມແບບປາລະໄນ</u>

5. ບົດທີໜຶ່ງເຖິງບົດທີເຈັດຂອງພຣະທຳກິດຈະການແມ່ນ:

ກ) ເລື່ອງການເລີ່ມຕົ້ນຂອງຄຣິສຕະຈັກ, ພຣະກາຍຂອງພຣະເຢຊູຄຣິດ.

ຂ) ການສືບຕໍ່ຂອງ "ເວລາທີ່ຜ່ານມາ."

ຄ) ການເລີ່ມຕົ້ນຍຸກແຫ່ງພຣະຄຸນ.

ງ) ຄຳອະທິບາຍກ່ຽວກັບພັນທະກິດຂອງພຣະຄຣິດເທິງແຜ່ນດິນໂລກນີ້.

6. ພຣະທຳກິດຈະການບອກກ່ຽວກັບ:

ກ) ການຍອມຮັບເອົາອານາຈັກຂອງພຣະເຈົ້າຂອງອິດສະຣາເອນ.

ຂ) ການທີ່ອິດສະຣາເອນກັບໃຈໃໝ່ ແລະ ມີຄວາມເຊື່ອ.

ຄ) ຄວາມຖ່ອມຕົວ ແລະ ຄວາມຮັກຂອງອິດສະຣາເອນທີ່ມີຕໍ່ພຣະຄຳຂອງພຣະເຈົ້າ.

ງ) ການປະຕິເສດອານາຈັກພຣະເຈົ້າຂອງອິດສະຣາເອນ.

7. ໃນພຣະຄຳພີເດີມ:

ກ) ພຣະເຈົ້າພຣະບິດາໄດ້ກ່າວກັບອິດສະຣາເອນໂດຍຜ່ານທາງຜູ້ປະກາດພຣະທຳ.

ຂ) ພຣະເຈົ້າພຣະບຸດໄດ້ກ່າວກັບອິດສະຣາເອນໂດຍຜ່ານພັນທະກິດຂອງພຣະຄຣິດເທິງແຜ່ນດິນໂລກນີ້.

ຄ) ພຣະເຈົ້າພຣະວິນຍານບໍລິສຸດກ່າວກັບອິດສະຣະເອນຜ່ານທາງພວກສາວົກທີ່ເຕັມໄປດ້ວຍພຣະວິນຍານບໍລິສຸດ.

ຄ) ຜູ້ປະກາດພຣະທຳໄດ້ປະກາດວ່າ ອານາຈັກຢູ່ໃກ້ແລ້ວ.

<u>ຕື່ມໃສ່ຊ່ອງຫວ່າງ</u>

8. ໂບດ, ການສຳມະນາ ແລະ ໂຮງຮຽນສອນພຣະຄຳພີຫຼາຍແຫ່ງສອນຜິດວ່າ ຄຣິສຕະຈັກ ຄື ພຣະກາຍຂອງພຣະຄຣິດໄດ້ເລີ່ມຕົ້ນໃນ_______________.

9. ໃນກິດຈະການບົດທີ 2, ເປໂຕກ່າວວ່າ ພຣະຄຣິດໄດ້ຄືນມາຈາກຕາຍ ເພື່ອນັ່ງຢູ່ເທິງບັນລັງຂອງ_______________.

10. ຂ່າວປະເສີດແຫ່ງ________________ບໍ່ສາມາດພົບເຫັນຢູ່ໃນກິດຈະການບົດທີ 1-7.